# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ນາຍົກລັດຖະມົນຕີ** | ເລກທີ ໑໘໐ /ນຍ
ວັນທີ ໑໖-໐໗-໒໐໐໑

# ດຳລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະກຳມະການແຜນການ ແລະ ການຮ່ວມມື

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກສະບັບເລກທີ...........ລົງວັນທີ .............

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I
## ວ່າດ້ວຍທີ່ຕັ້ງ ແລະ ພາລະບົດບາດ

**<u>ມາດຕາ 1</u>: ທີ່ຕັ້ງ ແລະ ພາລະບົດບາດ:**

ຄະນະກຳມະການແຜນການ ແລະ ການຮ່ວມມື, ຊຶ່ງຂຽນເປັນຕົວອັກສອນຫຍໍ້ " **ຄຜຮ** " ເປັນອົງການຈັດຕັ້ງຄຸ້ມຄອງລັດຂັ້ນສູນກາງ ໃນກົງຈັກລັດຖະບານ, ມີພາລະບົດບາດເປັນເສນາທິການຊ່ວຍສູນກາງພັກ ແລະ ລັດຖະບານໃນການຄົ້ນຄ້ວາສ້າງ, ສັງລວມ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ: ແຜນພັດທະນາເສດຖະກິດ-ສັງຄົມ; ຂໍ້ມູນສະຖິຕິທາງການ; ສ້າງນະໂຍບາຍ ແລະ ດຸ່ນດ່ຽງເສດຖະກິດມະຫາພາກ; ສົ່ງເສີມ ແລະ ຄຸ້ມຄອງວຽກງານການຮ່ວມມືເສດຖະກິດກັບຕ່າງປະເທດ, ການລົງທຶນພາຍໃນ ແລະ ຕ່າງປະເທດ ຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

**ຄຜຮ** ຮັບຜິດຊອບໃນການຈັດຕັ້ງປະຕິບັດຕາມໜ້າທີ່ ແລະ ຂອບເຂດສິດ ໃນການຄຸ້ມຄອງ ບໍລິຫານລັດ ຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປລາວ ສະບັບເລກທີ 01/95, ລົງວັນທີ 8 ມີນາ 1995.

# ໝວດທີ່ II

## ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ

<u>ມາດຕາ 2</u>: **ໜ້າທີ່ຂອງ ຄະນະກຳມະການແຜນການ ແລະ ການຮ່ວມມື:**

2.1. ຄົ້ນຄ້ວາຫັນເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃຫ້ກາຍເປັນຍຸດທະສາດພັດທະນາເສດຖະກິດ-ສັງຄົມ, ແຜນການໄລຍະກາງ, ແຜນການ ຫ້າປີ ແລະ ແຜນການປະຈຳປີເພື່ອສະເໜີລັດຖະບານພິຈາລະນາ.

2.2. ຄົ້ນຄ້ວານະໂຍບາຍ, ລະບຽບກົດໝາຍ ແລະ ຂໍ້ກຳນົດຕ່າງໆ ກ່ຽວກັບວຽກງານແຜນການ, ສະຖິຕິ, ການລົງທຶນ ແລະ ຮ່ວມມືເສດຖະກິດກັບຕ່າງປະເທດ.

2.3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ ແລະ ປະຕິບັດການຄຸ້ມຄອງ ແລະ ດັດສົມເສດຖະກິດມະຫາພາກ.

2.4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາຍຸດທະສາດ, ນະໂຍບາຍ, ທິດທາງ ແລະ ແຜນການຮ່ວມມືເສດຖະກິດກັບຕ່າງປະເທດໃນແຕ່ລະໄລຍະເພື່ອສະເໜີລັດຖະບານພິຈາລະນາ ແລະ ຮັບຮອງເອົາ; ພາຍຫລັງລັດຖະບານຮັບຮອງເອົາແລ້ວ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງດຳເນີນການປຶກສາຫາລືກັບຕ່າງປະເທດແລ້ວລາຍງານໃຫ້ລັດຖະບານຕົກລົງ

2.5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາຍຸດທະສາດ, ນະໂຍບາຍວ່າດ້ວຍການສົ່ງເສີມ ແລະ ດຶງດູດການລົງທຶນຂອງພາຍໃນ ແລະ ຕ່າງປະເທດເພື່ອສະເໜີລັດຖະບານພິຈາລະນາຮັບຮອງ, ພ້ອມທັງໂຄສະນາເຜີຍແຜ່ແນວທາງນະໂຍບາຍດັ່ງກ່າວ, ສະໜອງຂໍ້ມູນ-ຂ່າວສານ ແລະ ອຳນວຍຄວາມສະດວກທີ່ຈຳເປັນເພື່ອດຶງດູດການລົງທຶນຂອງພາຍໃນ ແລະ ຕ່າງປະເທດ.

2.6. ຄົ້ນຄ້ວາພິຈາລະນາຂໍ້ສະເໜີຂໍການຊ່ວຍເຫລືອລ້າ ແລະ ກູ້ຢືມຈາກຕ່າງປະເທດ, ຄຳຮ້ອງຂໍສະເໜີລົງທຶນຂອງພາຍໃນ ແລະ ຕ່າງປະເທດໂດຍມີການປະສານສົມທົບດ້ານວິຊາການກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ນຳສະເໜີຜົນການຄົ້ນຄ້ວາດັ່ງກ່າວເພື່ອຂໍອະນຸມັດຕາມຂັ້ນຕອນ ແລະ ລະບຽບການ.

2.7. ເປັນໃຈກາງ ໃນການຊີ້ນຳ, ນຳພາ ແລະ ຈັດຕັ້ງປະຕິບັດວຽກງານສະຖິຕິ ໂດຍການສຳຫລວດເກັບກຳ, ສັງລວມ, ວິໄຈ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ, ນັບທັງການບໍລິການວິຊາການສະຖິຕິເພື່ອຮັບໃຊ້ສັງຄົມ.

2.8. ເກັບກຳ, ຄົ້ນຄ້ວາ, ວິໄຈບັນດາຂໍ້ມູນເສດຖະກິດ-ສັງຄົມ, ສັງລວມ ແລະ ສ້າງເປັນເອກະສານເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ລັດຖະບານໃນແຕ່ລະດ້ານ.

2.9. ປະສານສົມທົບກັບກະຊວງການເງິນ ໃນວຽກງານຈັດແບ່ງງົບປະມານການລົງທຶນຂອງລັດ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ລວມທັງທຶນສົມທົບກັບໂຄງການຮ່ວມມືກັບຕ່າງປະເທດເພື່ອສະເໜີລັດຖະບານພິຈາລະນາ.

2.10. ເປັນໃຈກາງໃນການສະຫລຸບສັງລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ການຮ່ວມມືເສດຖະກິດກັບຕ່າງປະເທດ, ການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ ແລະ ຮັບຮອງ.

2.11. ຕິດຕາມ, ກວດກາ, ແນະນຳ ອຳນວຍຄວາມສະດວກການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ໂຄງການຮ່ວມມືເສດຖະກິດກັບຕ່າງປະເທດ, ໂຄງການລົງທຶນຂອງລັດ, ໂຄງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ.

2.12. ຈັດຕັ້ງຝຶກອົບຮົມດ້ານວິຊາການກ່ຽວກັບວຽກງານແຜນການ, ສະຖິຕິ, ການຮ່ວມມື ແລະ ລົງທຶນໃນຂອບເຂດທົ່ວປະເທດເພື່ອຍົກລະດັບຄວາມຮູ້, ຄວາມສາມາດໃນການປະຕິບັດໜ້າທີ່ວຽກງານ.

2.13. ຊີ້ນຳດ້ານວິຊາການກ່ຽວກັບວຽກງານສະຖິຕິ-ແຜນການ, ການລົງທຶນ ແລະ ຮ່ວມມືເສດຖະກິດກັບຕ່າງປະເທດໃຫ້ຂະແໜງການ ແລະ ທ້ອງຖິ່ນເພື່ອເອກະພາບໃນການຈັດຕັ້ງປະຕິບັດ.

2.14. ສຶກສາອົບຮົມການເມືອງແນວຄິດ, ປັບປຸງບູລະນະກົງຈັກການຈັດຕັ້ງ ແລະ ກໍ່ສ້າງ, ບຳລຸງຍົກລະດັບວິຊາສະເພາະໃຫ້ພະນັກງານລັດຖະກອນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

2.15. ຂຶ້ນແຜນງົບປະມານການເຄື່ອນໄຫວສຳລັບຂະແໜງການຂອງຕົນ ແລະ ຈັດຕັ້ງຄຸ້ມຄອງງົບປະມານ, ຊັບສິນບັດຂອງລັດທີ່ຂຶ້ນກັບການຄຸ້ມຄອງຂອງຕົນໃຫ້ຖືກເປົ້າໝາຍ ແລະ ສອດຄ່ອງກັບລະບຽບການ.

**<u>ມາດຕາ 3</u>: ຂອບເຂດສິດຂອງ ຄະນະກຳມະການແຜນການ ແລະ ການຮ່ວມມື:**

3.1. ອອກຄຳສັ່ງ, ບົດແນະນຳ ແລະ ແຈ້ງການ ເພື່ອເຜີຍແຜ່ນະໂຍບາຍ, ຂໍ້ກຳນົດ, ກົດລະບຽບ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງກັບພາລະບົດບາດຂອງຂະແໜງການແຜນການ ແລະ ການຮ່ວມມື.

3.2. ເລືອກເຟັ້ນ, ຈັດລຽງບູລິມະສິດ ບັນດາໂຄງການລົງທຶນຂອງລັດ, ໂຄງການຮ່ວມມືເສດຖະກິດກັບຕ່າງປະເທດ ຕາມການສະເໜີຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ. ພ້ອມກັນນັ້ນກໍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງດັດແກ້ໂຄງການຖ້າເຫັນວ່າມີຄວາມຈຳເປັນ ເພື່ອສະເໜີລັດຖະບານພິຈາລະນາຕົກລົງ.

3.3. ເລືອກເຟັ້ນ, ຈັດລຽງບູລິມະສິດ ແລະ ສະເໜີນະໂຍບາຍກະຕຸກຊຸກຍູ້ໂຄງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ເພື່ອຂໍອະນຸມັດຕາມຂັ້ນຕອນ ແລະ ລະບຽບການ.

3.4. ບົນພື້ນຖານຄວາມເປັນເອກະພາບກັບຂະແໜງການທີ່ກ່ຽວຂ້ອງ ປະທານ ຄຜຮ ອະນຸມັດບັນດາໂຄງການຊ່ວຍເຫລືອລ້າຈາກຕ່າງປະເທດ.ໃນກໍລະນີໂຄງການຊ່ວຍເຫລືອລ້າທີ່ບໍ່ເອກະພາບກັນນັ້ນໃຫ້ສະເໜີລັດຖະບານພິຈາລະນາຕົກລົງ. ສຳລັບໂຄງການກູ້ຢືມຈາກຕ່າງປະເທດທັງໝົດນັ້ນໃຫ້ສະເໜີລັດຖະບານພິຈາລະນາອະນຸມັດ.

3.5. ດຳເນີນການເຈລະຈາ, ເຊັນສັນຍາ, ອານຸສັນຍາ ແລະ ບົດບັນທຶກຕ່າງໆກັບພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງລັດຖະບານ.

3.6. ພິຈາລະນາ ແລະ ແກ້ໄຂບັນດາບັນຫາທີ່ເກີດຂຶ້ນໃນເວລາປະຕິບັດໂຄງການລົງທຶນຂອງລັດ, ໂຄງການຮ່ວມມືເສດຖະກິດກັບຕ່າງປະເທດ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດຕາມຂັ້ນຕອນ ແລະ ລະບຽບການ ໂດຍປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

3.7. ທວງເອົາບົດສະຫລຸບລາຍງານ, ຂ່າວສານ-ສະຖິຕິ ແລະ ເອກະສານທາງການຕ່າງໆ ທີ່ຈຳເປັນຈາກພາກສ່ວນທີ່ກ່ຽວຂ້ອງເພື່ອສັງລວມ ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ.

3.8. ສັ່ງໂຈະຊົ່ວຄາວໂຄງການລົງທຶນຂອງລັດ, ໂຄງການຮ່ວມມືເສດຖະກິດກັບຕ່າງປະເທດ, ໂຄງການລົງທຶນຂອງພາຍໃນ ແລະ ຕ່າງປະເທດທີ່ເຫັນວ່າມີການເຄື່ອນໄຫວຜິດກັບເປົ້າໝາຍ, ຂັດກັບສັນຍາ, ຂັດກັບລະບຽບກົດໝາຍເພື່ອສະເໜີລັດຖະບານພິຈາລະນາແກ້ໄຂຕາມຂັ້ນຕອນ ແລະ ລະບຽບການ.

3.9. ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ສັບຊ້ອນໜ້າທີ່, ຄຸ້ມຄອງ, ນຳໃຊ້, ຍ້ອງຍໍ, ປົດຕຳແໜ່ງ, ປະຕິບັດວິໄນຕໍ່ພະນັກງານລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ.

3.10. ຕົກລົງສ້າງຕັ້ງ, ປັບປຸງ ແລະ ລົບລ້າງໜ່ວຍງານສະເພາະກິດ, ບັນດາກົງຈັກການຈັດຕັ້ງຂັ້ນພະແນກຂອງກົມກອງ ຄຜຮ, ຂະແໜງວິຊາສະເພາະຂອງພະແນກແຜນການ ແລະ ການຮ່ວມມືຂັ້ນແຂວງ, ຫ້ອງການສະຖິຕິ-ແຜນການຂັ້ນເມືອງ.

# ໝວດທີ III
## ວ່າດ້ວຍການນຳ ແລະ ໂຄງປະກອບການຈັດຕັ້ງ

<u>ມາດຕາ 4</u>: ການນຳຂອງຄະນະກຳມະການແຜນການ ແລະ ການຮ່ວມມື.

4.1. ຄຜຮ ປະກອບດ້ວຍ ປະທານ, ເປັນສະມາຊິກຂອງລັດຖະບານ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ຖືກຮັບຮອງຈາກສະພາແຫ່ງຊາດ.

4.2. ປະທານ ມີຄວາມຮັບຜິດຊອບໃນການການປະຕິບັດພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງຕົນຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປລາວ ພ້ອມທັງຮັບຜິດຊອບຕໍ່ການເຄື່ອນໄຫວ ຂະແໜງແຜນການ ແລະ ການຮ່ວມມືໃນຂອບເຂດທົ່ວປະເທດ, ອຳນວຍຄວາມສະດວກ, ຄວບຄຸມການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ. ປະທານ ມີສິດມອບຄວາມຮັບຜິດຊອບຊົ່ວຄາວໃຫ້ຜູ້ຮອງຮັກສາການແທນໃນເວລາຕິດຂັດ ຫລື ໄປວຽກທາງໄກ.

4.3. ຄຜຮ ຄະນະກຳມະການແຜນການ ແລະ ການຮ່ວມມືປະກອບມີຮອງປະທານຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ. ຮອງປະທານເປັນຜູ້ຊ່ວຍວຽກປະທານ ແລະ ລົງເລິກຮັບຜິດຊອບກຸ່ມວຽກໃດໜຶ່ງຕາມການມອບໝາຍຂອງປະທານ.

<u>ມາດຕາ 5</u>: ການນຳ ແລະ ພະນັກງານຂອງຂະແໜງວິຊາສະເພາະຂັ້ນສູນກາງ.

5.1. ການນຳຂອງຂະແໜງວິຊາສະເພາະປະກອບດ້ວຍ ບັນດາຫົວໜ້າ ຫ້ອງການ, ຫົວໜ້າກົມ, ຫົວໜ້າສູນ ແລະ ຫົວໜ້າສະຖາບັນ ຊຶ່ງແມ່ນນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເປັນເອກະພາບກັບ ປະທານ ຄຜຮ.

5.2. ປະທານ ຄຜຮ ເປັນຜູ້ແຕ່ງຕັ້ງ ການນຳຂັ້ນຮອງ ຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສູນ, ຮອງຫົວໜ້າສະຖາບັນ ແລະ ການນຳຂັ້ນພະແນກ, ຂັ້ນໜ່ວຍງານ ແລະ ໂຄງການ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ຄຜຮ ໂດຍຖືກຕ້ອງຕາມມາດຖານທີ່ກຳນົດໄວ້.

5.3. ຄຜຮ ປະກອບດ້ວຍພະນັກງານວິຊາການ, ພະນັກງານບໍລິຫານຮັບໃຊ້ ທົ່ວໄປຈຳນວນໜຶ່ງ ເພື່ອປະກອບເຂົ້າຕຳແໜ່ງງານຕ່າງໆ ຕາມຄວາມເໝາະສົມ.

<u>ມາດຕາ 6:</u> ວ່າດ້ວຍໂຄງປະກອບການຈັດຕັ້ງຂອງຂະແໜງວິຊາສະເພາະຂັ້ນສູນກາງ.

1. ຫ້ອງການ ຄຜຮ.
2. ກົມຈັດຕັ້ງ ແລະ ພະນັກງານ.
3. ກົມແຜນການສັງລວມ.
4. ກົມຮ່ວມມືເສດຖະກິດກັບຕ່າງປະເທດ.
5. ກົມຄຸ້ມຄອງໂຄງການລົງທຶນຂອງລັດ.
6. ກົມສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ.
7. ກົມຕິດຕາມ ແລະ ປະເມີນຜົນໂຄງການລົງທຶນ.
8. ສູນສະຖິຕິແຫ່ງຊາດ.
9. ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ.

ຢູ່ພາຍໃນກົມ ແລະ ທຽບເທົ່າກົມອະນຸຍາດໃຫ້ມີພະແນກການ, ໂຄງການ ແລະ ໜ່ວຍງານວິຊາສະເພາະຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງວຽກງານ.

<u>ມາດຕາ 7</u>: ຫລັກການຄຸ້ມຄອງນຳພາຕາມຂະແໜງການ.

7.1. ຄຜຮ ຄຸ້ມຄອງນຳພາຂະແໜງການແຜນການ ແລະ ການຮ່ວມມືຕາມສາຍຕັ້ງຂອງຕົນ ແຕ່ ຄະນະກຳມະການແຜນການ ແລະ ການຮ່ວມມືຂັ້ນສູນກາງລົງຮອດຂະແໜງການ ແລະ ທ້ອງຖິ່ນ ທາງດ້ານວິຊາ

ສະເພາະ ໂດຍຖືເອົາກົມແຜນການ ແລະການຮ່ວມມື ຫລື ອົງການທີ່ເຮັດວຽກງານແຜນການ ແລະ ການຮ່ວມມືຂອງຂະແໜງການຂັ້ນສູນກາງ ແລະ ພະແນກແຜນການ ແລະ ການຮ່ວມມືປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດຈັດຕັ້ງປະຕິບັດພາລະບົດບາດ ແລະ ລະບຽບຫລັກການຂອງວິຊາສະເພາະ.

7.2. ພະແນກແຜນການ ແລະ ການຮ່ວມມືປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ປະກອບມີຫົວໜ້າ ແລະ ຮອງຫົວໜ້າພະແນກ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ຈາກປະທານ ຄຜຮ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ຄຜຮ ບົນພື້ນຖານຄວາມເປັນເອກະພາບກັບເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ແລະ ຫົວໜ້າເຂດພິເສດ.

7.3. ຫົວໜ້າ ແລະ ຮອງຫົວໜ້າຂະແໜງວິຊາສະເພາະທີ່ຂຶ້ນກັບພະແນກແຜນການ ແລະ ການຮ່ວມມືປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຈາກປະທານ ຄຜຮ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ຄຜຮ ບົນພື້ນຖານສະເໜີຂອງຫົວໜ້າພະແນກແຜນການ ແລະ ການຮ່ວມມື ແລະ ໄດ້ຮັບຄວາມເປັນເອກະພາບກັບຄະນະຈັດຕັ້ງຂອງແຂວງ, ກຳແພງນະຄອນ, ເຂດພິເສດ.

7.4. ຫ້ອງການສະຖິຕິ-ແຜນການເມືອງປະກອບມີຫົວໜ້າ ແລະ ຮອງຫົວໜ້າຫ້ອງການແຜນການໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຈາກ ປະທານ ຄຜຮ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ຄຜຮ ບົນພື້ນຖານການສະເໜີຂອງຫົວໜ້າພະແນກແຜນການ ແລະ ການຮ່ວມມືປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ໂດຍໄດ້ຮັບຄວາມເປັນເອກະພາບກັບເຈົ້າເມືອງທີ່ກ່ຽວຂ້ອງ.

<u>ມາດຕາ 8:</u> ໂຄງປະກອບການຈັດຕັ້ງຂອງ ຂະແໜງແຜນການ ແລະ ການຮ່ວມມືຂັ້ນທ້ອງຖິ່ນ.

1. ພະແນກແຜນການ ແລະ ການຮ່ວມມືປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ.
2. ຫ້ອງການສະຖິຕິ-ແຜນການເມືອງ.

ຢູ່ພາຍໃນພະແນກແຜນການ ແລະ ການຮ່ວມມື, ຫ້ອງການສະຖິຕິ-ແຜນການເມືອງອະນຸຍາດໃຫ້ມີຂະແໜງ, ໂຄງການ ແລະ ໜ່ວຍງານວິຊາສະເພາະຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງວຽກງານ.

<u>ມາດຕາ 9:</u> ມອບໃຫ້ ປະທານ ຄຜຮ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຕຳແໜ່ງງານຂອງຫ້ອງການ, ບັນດາກົມ, ສະຖາບັນ, ສູນ ແລະ ພະແນກແຜນການ ແລະ ການຮ່ວມມືປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ບົນພື້ນຖານຄວາມເອກະພາບກັບຄະນະຈັດຕັ້ງສູນກາງພັກ.

# ໝວດທີ IV

## ວ່າດ້ວຍລະບອບແບບແຜນ ວິທີເຮັດວຽກ

<u>ມາດຕາ 10:</u> ຄະນະກຳມະການແຜນການ ແລະ ການຮ່ວມມື ເຮັດວຽກຕາມຫລັກການລຸ່ມນີ້:

9.1. ການເຄື່ອນໄຫວ ແລະ ດຳເນີນງານຂອງຄະນະກຳມະການແຜນການ ແລະ ການຮ່ວມມື ຕ້ອງຍຶດໝັ້ນຍຸດທະສາດ ແລະ ແນວທາງນະໂຍບາຍຂອງພັກ, ນະໂຍບາຍ ແລະ ລະບຽບກົດໝາຍຂອງລັດຖະບານ.

9.2. ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວຢ່າງເຂັ້ມງວດ ແລະ ມີການແບ່ງງານກັນຢ່າງຈະແຈ້ງ. ການມອບສິດ ແລະ ມອບຄວາມຮັບຜິດຊອບຕ້ອງເປັນລາຍລັກອັກສອນ.

9.3. ເຮັດວຽກຢ່າງມີ ແຜນການ, ມີກຳນົດເວລາ, ຕາມສາຍການຈັດຕັ້ງ, ມີການປະສົມປະສານ ແລະ ມີການຕິດຕາມກວດກາເປັນປົກກະຕິ ເພື່ອຊຸກຍູ້ ການຈັດຕັ້ງປະຕິບັດແນວທາງນະໂຍບາຍລວມ ຂອງພັກ ແລະ ບັນດາລະບຽບກົດໝາຍຕ່າງໆຂອງລັດຖະບານ ໃຫ້ໄດ້ຮັບຜົນເປັນຢ່າງດີ, ຊອກວິທີ ການແກ້ໄຂຢ່າງທັນການຕໍ່ບັນຫາຕ່າງໆທີ່ເກີດຂຶ້ນ.

10.4. ຕ້ອງປະຕິບັດລະບອບຮ່ວມປະຊຸມ, ສ່ອງແສງ, ລາຍງານ, ກວດກາຢ່າງເຂັ້ມງວດ ເປັນຕົ້ນແມ່ນ ກອງປະຊຸມປະຈຳອາທິດ, ກອງປະຊຸມສະຫລຸບປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິສາມັນຕ່າງໆ ເພື່ອກຳສະພາບການຮອບດ້ານ ຈາກແຕ່ລະພາກສ່ວນ ແລ້ວ ສັງລວມ ລາຍງານໃຫ້ລັດຖະບານຊາບ.

## ໝວດທີ VI
## ວ່າດ້ວຍຂໍ້ບັນຍັດສຸດທ້າຍ

ມາດຕາ 11: ຄະນະກຳມະການແຜນການ ແລະ ການຮ່ວມມື, ບັນດາກົມ ແລະ ຫ້ອງການ ... ບັນດາກົມ ແລະ ທຽບເທົ່າກົມ, ພະແນກແຜນການ ແຂວງ, ກຳແພງນະຄອນ, ເຂດພິເສດ ແລະ ຫ້ອງການສະຖິຕິ-ແຜນການເມືອງ ອະນຸຍາດໃຫ້ມີກາປະທັບຂອງ ຕົນ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

ມາດຕາ 12: ຄະນະກຳມະການແຜນການ ແລະ ການຮ່ວມມື, ບັນດາກະຊວງ ແລະ ອົງການທຽບເທົ່າ, ແຂວງ, ກຳແພງ ນະຄອນແລະເຂດພິເສດ, ເມືອງ ແລະ ທຸກພາກສ່ວນ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມ ງວດ.

ມາດຕາ 13: ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ຂອງນາຍົກລັດຖະ ມົນຕີ ສະບັບເລກທີ່ 32/ ນຍ ລົງວັນທີ່ 19 / 04 /1999.

ນາຍົກລັດຖະມົນຕີ ແຫ່ງ ສປປ.ລາວ.

ບຸນຍັງ ວໍລະຈິດ